# ພາບລວມກ່ຽວກັບການປະເມີນ

ເພື່ອເຂົ້າເຖິງເງິນສົງເຄາະ WA Cares Fund ຂອງທ່ານ, ທ່ານຈະຕ້ອງບັນລຸໃຫ້ໄດ້ຕາມທັງຂໍ້ກຳນົດວ່າດ້ວຍການຈ່າຍເງິນສົມທົບ ແລະ ຂໍ້ກຳນົດວ່າດ້ວຍຄວາມຕ້ອງການດ້ານການເບິ່ງແຍງດູແລ. ຈົດໝາຍແຈ້ງກ່ຽວກັບການກຳນົດການຈ່າຍເງິນສົມທົບຂອງທ່ານ ຈະແຈ້ງບອກທ່ານວ່າທ່ານສາມາດບັນລຸໄດ້ຕາມຂໍ້ກຳນົດວ່າດ້ວຍການຈ່າຍເງິນສົມທົບ ຫຼື ບໍ່ ແລະ ຈຳນວນເງິນສົງເຄາະທີ່ທ່ານມີສິດໄດ້ຮັບ. ຂໍ້ກຳນົດວ່າດ້ວຍຄວາມຕ້ອງການດ້ານການເບິ່ງແຍງດູແລ ຈະໄດ້ຮັບການຢືນຢັນຜ່ານການປະເມີນຄວາມຕ້ອງການດ້ານການເບິ່ງແຍງດູແລ.

ໃນລະຫວ່າງການປະເມີນຄວາມຕ້ອງການດ້ານການເບິ່ງແຍງດູແລ, ພວກເຮົາຈະປຶກສາກັບທ່ານກ່ຽວກັບຄວາມຊ່ວຍເຫຼືອທີ່ທ່ານອາດຈະຕ້ອງການໃນການເຮັດກິດຈະວັດປະຈຳວັນຕ່າງໆ ແລະ ຄາດວ່າຄວາມຕ້ອງການນັ້ນຈະສືບຕໍ່ໄປຢ່າງໜ້ອຍ 90 ວັນ ຫຼື ບໍ່.

### ກິດຈະກຳຕ່າງໆທີ່ພວກເຮົາຈະປະເມີນ

- ການອາບນ້ຳ
- ການເຄື່ອນໄຫວເທິງຕຽງ
- ການກິນ
- ການຈັດການຢາ
- ການເຄື່ອນໄຫວໄປມາ
- ການຍ້າຍໄປມາ
- ການໃຊ້ຫ້ອງນ້ຳ

ຖ້າທ່ານສາມາດບັນລຸໄດ້ຕາມຂໍ້ກຳນົດທັງສອງຢ່າງ, ທ່ານອາດຈະໄດ້ຮັບການອະນຸມັດຮັບເງິນສົງເຄາະຂອງ WA Cares.

## ຂໍ້ມູນການກຳນົດເວລາ

ທ່ານຈະໃຊ້ບັນຊີຮັບເງິນສົງເຄາະຂອງທ່ານເພື່ອກຳນົດເວລາໂທລະສັບກັບສະມາຊິກທີມງານ WA Cares ເພື່ອເລີ່ມຂະບວນການປະເມີນ. ຖ້າທ່ານບໍ່ສາມາດກຳນົດເວລາຜ່ານບັນຊີຮັບເງິນສົງເຄາະຂອງທ່ານໄດ້, ກະລຸນາຕິດຕໍ່ພວກເຮົາທາງໂທລະສັບ ຫຼື ທາງອີເມວ.

ໃນລະຫວ່າງການໂທລະສັບ, ພວກເຮົາຈະຖາມກ່ຽວກັບຄວາມຕ້ອງການດ້ານການເບິ່ງແຍງດູແລຂອງທ່ານ ແລະ ກຳນົດການນັດໝາຍສຳລັບການປະເມີນຂອງທ່ານ. ພວກເຮົາສາມາດໃຫ້ການຊ່ວຍເຫຼືອດ້ານພາສາ ແລະ ສິ່ງອຳນວຍຄວາມສະດວກສຳລັບການເຂົ້າເຖິງໄດ້ ໃນລະຫວ່າງການປະເມີນຂອງທ່ານ. ຕົວຢ່າງ: ພວກເຮົາຈະເຮັດໃຫ້ສາມາດຮັບປະກັນໄດ້ວ່າການນັດໝາຍແມ່ນຈັດຂຶ້ນຢູ່ໃນສະຖານທີ່ທີ່ເອື້ອອຳນວຍຕໍ່ຄວາມຕ້ອງການດ້ານການເຄື່ອນໄຫວໄປມາຂອງທ່ານ ຫຼື ປັບ ຕາຕະລາງເວລາເພື່ອໃຫ້ມີເວລາຫຼາຍຂຶ້ນໄດ້. ກະລຸນາແຈ້ງໃຫ້ພວກເຮົາຊາບເຖິງສິ່ງທີ່ທ່ານຕ້ອງການໄວ້ລ່ວງໜ້າ.

ນອກຈາກນັ້ນ, ທ່ານກໍຍັງສາມາດພາຜູ້ມາຊ່ວຍມານຳໄດ້ຢ່າງໜ້ອຍໜຶ່ງຄົນໃນລະຫວ່າງ ການປະເມີນຂອງທ່ານອີກດ້ວຍ. ຜູ້ມາຊ່ວຍນີ້ສາມາດໃຫ້ຄວາມໝັ້ນໃຈ ແລະ ຊ່ວຍເຮັດໃຫ້ແນ່ໃຈວ່າຜູ້ປະເມີນມີຄວາມເຂົ້າໃຈເຖິງຄວາມຕ້ອງການ ແລະ ຄວາມມັກຂອງທ່ານແລ້ວ.

## ການປະເມີນແບບເຊິ່ງໜ້າ

ການປະເມີນແບບເຊິ່ງໜ້າສາມາດຈະຈັດຂຶ້ນຢູ່ເຮືອນຂອງທ່ານ ຫຼື ຫ້ອງການຂອງ Department of Social and Health Services ໄດ້. ການປະເມີນນີ້ຈະດຳເນີນໂດຍສະມາຊິກໃນທີມງານ WA Cares ທີ່ມາຈາກ DSHS ຫຼື ພະນັກງານຈາກອົງການ Area Agency on Aging ໃນທ້ອງຖິ່ນຂອງທ່ານ. ການປະເມີນຄວາມຕ້ອງການດ້ານການເບິ່ງແຍງດູແລອາດໃຊ້ເວລາ 90 ນາທີ ຫຼື ດົນກວ່ານັ້ນຈຶ່ງຈະສຳເລັດ.

## ວິທີການກະກຽມ

ເພື່ອຊ່ວຍໃຫ້ຂະບວນການດຳເນີນໄປຢ່າງລາບລື່ນ, ທ່ານອາດຈະຕ້ອງໄດ້ກະກຽມຂໍ້ມູນຕໍ່ໄປນີ້ໃຫ້ພ້ອມ.

### ລາຍການເຫຼົ່ານີ້ແມ່ນບໍ່ຈຳເປັນຕ້ອງມີ, ແຕ່ອາດເປັນປະໂຫຍດໄດ້:

- ບັນຊີລາຍການການບົ່ງມະຕິພະຍາດ, ອາການ ແລະ ພະຍາດໃນປັດຈຸບັນຂອງທ່ານ
- ບັນຊີລາຍຊື່ຢາ ແລະ ການປິ່ນປົວຂອງທ່ານ (ເພື່ອທຳຄວາມເຂົ້າໃຈເຖິງຄວາມຕ້ອງການການຊ່ວຍເຫຼືອໃນການຈັດການຢາຂອງທ່ານ, ພວກເຮົາຈະຖາມຈຳນວນຢາທີ່ທ່ານກິນ ແລະ ຈະບໍ່ບັນທຶກຢາສະເພາະດ້ານທີ່ທ່ານກິນ)
- ຂໍ້ມູນກ່ຽວກັບການບໍລິການເບິ່ງແຍງດູແລໄລຍະຍາວທີ່ທ່ານກຳລັງນຳໃຊ້ຢູ່ໃນປັດຈຸບັນ ຫຼື ໄດ້ໃຊ້ໄປແລ້ວຢູ່ໃນເດືອນທີ່ຜ່ານມາ
- ແຜນການເບິ່ງແຍງດູແລໃນປັດຈຸບັນ, ຖ້າມີ

ຖ້າທ່ານບໍ່ກຽມຂໍ້ມູນທັງໝົດນີ້ໃຫ້ພ້ອມ, ສະມາຊິກໃນທີມງານ WA Cares ຫຼືພະນັກງານຈາກອົງການ Area Agency on Aging ໃນທ້ອງຖິ່ນຂອງທ່ານຈະຄອຍແນະນຳທ່ານຕະຫຼອດຂະບວນການ.

## ສຶກສາເພີ່ມເຕີມ

### ໂທລະສັບ

844-CARE4WA
(844-227-3492)

### ອີເມວ ຫຼື ແຊັດ

wacaresfund.wa.gov/contact

ພວກເຮົາມີການຊ່ວຍເຫຼືອດ້ານພາສາໃຫ້.
ສຳລັບຂໍ້ມູນທີ່ອັບເດດທີ່ສຸດ, ໃຫ້ເຂົ້າເບິ່ງ wacaresfund.wa.gov.